**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງອັດຕະປື ເລກທີ...04......./ຈຂອປ

ອັດຕະປື, ວັນທີ 14 ກຸມພາ 2025

# ຄໍາສັ່ງ

## ວ່າດ້ວຍ ເພີ່ມທະວີຄວາມເຂັ້ມງວດ ໃນການສະກັດກັ້ນ, ການບຸກລຸກທໍາລາຍປ່າໄມ້, ການຈັບຈອງ, ການຊື້ - ຂາຍ ທີ່ດິນປ່າໄມ້ ແລະ ການຕ້ານ, ສະກັນກັ້ນ ແລະ ປ້ອງກັນໄຟໄໝ້ລາມປ່າ ໃນຂອບເຂດທົ່ວແຂວງອັດຕະປື

**ເຖິງ: ບັນດາທ່ານຫົວໜ້າພະແນກການ, ອົງການທຽບເທົ່າອ້ອມຂ້າງແຂວງ, ກອງບັນຊາການທະຫານແຂວງ, ກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ບັນດາທ່ານເຈົ້າເມືອງ 05 ເມືອງ ແລະ ອົງການປົກຄອງບ້ານ ຕະຫຼອດຮອດພໍ່ແມ່ປະຊາຊົນບັນດາເຜົ່າ ໃນຂອບເຂດທົ່ວແຂວງອັດຕະປື.**

- ອີງຕາມ ກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015, ໝວດທີ VI, ມາດຕາ 20, ວ່າດ້ວຍສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;
- ອີງຕາມ ຄໍາສັ່ງ ຂອງນາຍົກລັດຖະມົນຕີ ວ່າດ້ວຍການເພີ່ມທະວີ ຄວາມເຂັ້ມງວດໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນໍາໃຊ້ປ່າໄມ້, ທີ່ດິນປ່າໄມ້, ຕ້ານ ແລະ ສະກັດກັ້ນ ການບຸກລຸກທໍາລາຍປ່າໄມ້, ທີ່ດິນປ່າໄມ້ ແລະ ໄຟໄໝ້ລາມປ່າ ສະບັບເລກທີ 11/ນຍ, ລົງວັນທີ 21 ກໍລະກົດ 2023;
- ອີງຕາມ ຄໍາສັ່ງ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຮັບຮູ້ສິດນໍາໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ສະບັບເລກທີ 20/ນຍ, ລົງວັນທີ 05 ພະຈິກ 2024;
- ອີງຕາມ ແຈ້ງການ ຂອງລັດຖະມົນຕີ ກະຊວງກະສິກໍາ ແລະ ປ່າໄມ້ ສະບັບເລກທີ 0024/ກປ, ລົງວັນທີ 06 ມັງກອນ 2025 ກ່ຽວກັບການເພີ່ມທະວີຄວາມຮັບຜິດຊອບ ໃນການສະກັດກັ້ນ, ຕ້ານໄຟໄໝ້ລາມປ່າ, ການຖາງປ່າເຮັດໄຮ່ ແລະ ການບຸກລຸກທໍາລາຍປ່າໄມ້ ແລະ ທີ່ດິນປ່າໄມ້ ເພື່ອການຜະລິດກະສິກໍາ;
- ອີງຕາມ ໜັງສືສະເໜີ ຂອງພະແນກກະສິກໍາ ແລະ ປ່າໄມ້ແຂວງ .ສະບັບເລກທີ 0324/ກປຂອປ, ລົງວັນທີ 10 ກຸມພາ 2025.

ຕະຫຼອດໄລຍະທີ່ຜ່ານມາ, ອົງການປົກຄອງແຂວງ ຍາມໃດກໍ່ໄດ້ເອົາໃຈໃສ່ ແລະ ຖືສໍາຄັນຕໍ່ກັບວຽກງານຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາປ່າໄມ້, ທີ່ດິນປ່າໄມ້, ໂດຍນໍາໃຊ້ມາດຕະການຫຼາຍຮູບ ຫຼາຍແບບ ມາແລ້ວກໍ່ຕາມ, ແຕ່ການບຸກລຸກ, ການທໍາລາຍປ່າໄມ້ ໂດຍສະເພາະການຖາງ, ຈູດປ່າ ປູກມັນຕົ້ນ, ການຖາງ, ຈູດປ່າ ເຮັດໄຮ່ສວນ, ການຈູດປ່າ ເພື່ອລ່າສັດ ທີ່ຈະເກີດຂຶ້ນໃນໄລຍະ ເດືອນ ມັງກອນ ຫາ ເດືອນເມສາ ເຊິ່ງຈະເຮັດໃຫ້ເກີດມີຝຸ່ນ PM 2,5 ເພີ່ມຂຶ້ນຫຼາຍ ຊຶ່ງມີຜົນກະທົບຕໍ່ສຸກະພາບ ແລະ ການດໍາລົງຊີວິດຂອງປະຊາຊົນບັນດາເຜົ່າ, ພ້ອມນັ້ນ, ຍັງມີການຈັບຈອງ ຊື້ - ຂາຍ ທີ່ດິນປ່າໄມ້ ລວມທັງການນໍາໃຊ້ທີ່ດິນປ່າໄມ້ ເຂົ້າໃນກິດຈະກໍາຕ່າງໆ ທີ່ບໍ່ຖືກຕ້ອງ ຕາມກົດໝາຍ ໃນຂອບເຂດທົ່ວແຂວງ ຍັງບໍ່ທັນສາມາດແກ້ໄຂໄດ້ຢ່າງຂາດຕົວ;

ເພື່ອສືບຕໍ່ເພີ່ມທະວີຄວາມເຂັ້ມງວດ ໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ປ່າໄມ້ໃຫ້ມີຄວາມຍືນຍົງ, ຕ້ານ, ສະກັດກັ້ນ ແລະ ປ້ອງກັນໄຟໄໝ້ລາມປ່າ, ການບຸກລຸກທຳລາຍປ່າໄມ້, ການຈັບຈອງ, ການຊື້-ຂາຍທີ່ດິນປ່າໄມ້ ໂດຍບໍ່ຖືກຕ້ອງຕາມກົດໝາຍ, ໃຫ້ສາມາດແກ້ໄຂໄດ້ຢ່າງທັນການ, ທັງເປັນການປະກອບສ່ວນເຂົ້າໃນຍຸດທະສາດການປົກຫຸ້ມຂອງເນື້ອທີ່ປ່າໄມ້ບໍ່ໃຫ້ຫຼຸດ 70% ແຕ່ນີ້ຮອດປີ 2035 ແລະ 2050 ໃນຂອບເຂດທົ່ວປະເທດເວົ້າລວມ, ເວົ້າສະເພາະ ຄາດໝາຍຄວາມປົກຫຸ້ມປ່າໄມ້ ໃຫ້ຢູ່ໃນລະດັບ 75% ຂອງເນື້ອທີ່ຄຸ້ມຄອງຂອງແຂວງອັດຕະປື.

## ເຈົ້າແຂວງ ອອກຄຳສັ່ງ:

1. ໃຫ້ບັນດາ ພະແນກການ, ອົງການທຽບເທົ່າອ້ອມຂ້າງແຂວງ, ກອງບັນຊາການທະຫານແຂວງ, ກອງບັນຊາການຕຳຫຼວດແຂວງ ບັນດາທ່ານເຈົ້າເມືອງ 05 ເມືອງ ແລະ ອົງການປົກຄອງບ້ານ ຕະຫຼອດຮອດພໍ່ແມ່ປະຊາຊົນບັນດາເຜົ່າໃນຂອບເຂດທົ່ວແຂວງສືບຕໍ່ເພີ່ມຄວາມເຂັ້ມງວດ ແລະ ເອົາໃຈໃສ່ປະຕິບັດໜ້າທີ່ຕາມຂອບເຂດສິດ ແລະ ຄວາມຮັບຜິດຊອບຂອງຕົນ ຕໍ່ກັບວຽກງານຄຸ້ມຄອງ, ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ ບໍ່ໃຫ້ຖືກທຳລາຍ ເຊິ່ງເປັນສາເຫດເຮັດໃຫ້ເກີດປະກົດການຫຍໍ້ທໍ້ໃນສັງຄົມ, ໂດຍໃຫ້ຖືເອົາວຽກງານດັ່ງກ່າວ ເປັນໜ້າທີ່ການເມືອງ, ເປັນຕົວຊີ້ບອກເຖິງຜົນສຳເລັດ ໃນການນຳພາ - ຊີ້ນຳ ຂອງຄະນະພັກ ແລະ ອົງການປົກຄອງທຸກຂັ້ນ;
2. ໃຫ້ບັນດາພະແນກການອ້ອມຂ້າງແຂວງ, ກອງບັນຊາການທະຫານແຂວງ, ກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ບັນດາທ່ານເຈົ້າເມືອງ 05 ເມືອງ ແລະ ອົງການປົກຄອງບ້ານ ສືບຕໍ່ເປັນເຈົ້າການໂຄສະນາເຜີຍແຜ່ນະໂຍບາຍ, ກົດໝາຍ, ດຳລັດ, ລະບຽບການຕ່າງໆ ກ່ຽວກັບວຽກງານຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ດ້ວຍຮູບການ ແລະ ວິທີການຕ່າງໆ ຢ່າງທົ່ວເຖິງ ເພື່ອເຮັດໃຫ້ສັງຄົມຮັບຮູ້ ເຂົ້າໃຈໄປໃນທິດທາງດຽວກັນ, ພ້ອມທັງເປັນເຈົ້າການຈັດຕັ້ງປະຕິບັດຢ່າງເຂັ້ມງວດ ໃນກໍລະນີຈຳເປັນໃຫ້ກະກຽມກຳລັງເພື່ອເຂົ້າໄປດັບໄຟປ່າທີ່ລຸກລາມເປັນບໍລິເວນກວ້າງ;
3. ໃຫ້ພະແນກກະສິກຳ ແລະ ປ່າໄມ້ແຂວງ ເປັນເຈົ້າການລົງຊີ້ນຳ, ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງເມືອງ ສືບຕໍ່ເຮັດການຕິດຕາມກວດກາ ແລະ ເກັບກຳຂໍ້ມູນ ການບຸກລຸກທຳລາຍປ່າໄມ້, ການຈັບຈອງ, ຊື້-ຂາຍທີ່ດິນປ່າໄມ້, ການຂຸດຄົ້ນ, ການເຄື່ອນຍ້າຍໄມ້ ແລະ ເຄື່ອງປ່າຂອງດົງ ທີ່ບໍ່ຖືກຕ້ອງຕາມກົດໝາຍດັ່ງນີ້:
   - 3.1 ຮີບຮ້ອນສ້າງ ແລະ ກຳນົດແຜນການລົງສຳຫຼວດ, ກຳນົດຂອບເຂດເນື້ອທີ່ປ່າໄມ້, ຕິດປ້າຍປັກຫຼັກໝາຍ ເຂດແດນປ່າໄມ້ ໃນແຕ່ລະປະເພດຄືນໃໝ່, ພ້ອມທັງດຳເນີນສ້າງແຜນຈັດສັນ ກຳນົດເຂດພື້ນທີ່ປ່າໄມ້ ໃນແຕ່ລະປະເພດປ່າ, ສາມາດແຍກໄດ້ ເຂດຫ້ອງຫ້າມເດັດຂາດ, ເຂດຄຸ້ມຄອງນຳໃຊ້ ແລະ ເຂດຄົ້ນຊົມປ່າໄມ້, ພ້ອມທັງດຳເນີນການແບ່ງຄວາມຮັບຜິດຊອບ ໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ປ່າໄມ້ ໃຫ້ອົງການປົກຄອງເມືອງ ແລະ ອົງການປົກຄອງບ້ານລະອຽດຈະແຈ້ງ;
   - 3.2 ທົບທວນ ປະເພດການນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ຂັ້ນບ້ານ, ພ້ອມທັງສ້າງແຜນກຳນົດມາດຕະການຈັດຕັ້ງປະຕິບັດ ແຜນຄຸ້ມຄອງປ່າໄມ້ຂັ້ນບ້ານ ທີ່ນອນຢູ່ໃນ ແລະ ຕິດແປະກັບ 3 ປະເພດປ່າໄມ້, ໂດຍການເຂົ້າຮ່ວມຂອງປະຊາຊົນບັນດາເຜົ່າ;
   - 3.3 ໃຫ້ຮີບຮ້ອນ ກຳນົດມາດຕະການຕ້ານ, ສະກັດກັ້ນ ແລະ ປ້ອງກັນໄຟໄໝ້ລາມປ່າ ໃນທຸກໆກໍລະນີ, ດ້ວຍການເກັບກຳຂໍ້ມູນ ແລະ ກຳນົດເຂດຄວາມສ່ຽງ, ຈັດຕັ້ງໜ່ວຍໂຄສະນາແນະນຳເຕັກນິກ ຫຼື ໜ່ວຍສະເພາະກິດ ປະກອບວັດຖຸອຸປະກອນ ແລະ ພາຫະນະທີ່ຈຳເປັນ, ໂດຍມີມາດຕະການດັບມອດໄຟຈະແຈ້ງ, ໂດຍການແຕ່ງຕັ້ງຄະນະຮັບຜິດຊອບຂັ້ນແຂວງ, ຂັ້ນເມືອງ ແລະ ບ້ານ ເພື່ອເຮັດໜ້າທີ່ເປັນເຈົ້າການ ໃນການ

ປຸກລະດົມປະຊາຊົນ, ພະນັກງານ ແລະ ກຳລັງປະກອບອາວຸດຕ່າງໆ ເຂົ້າຮ່ວມ, ປະສານກັບກຳລັງປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແລະ ແຂວງທີ່ໃກ້ຄຽງ ກໍລະນີເກີດມີໄຟໄໝ້ລາມປ່າຮຸນແຮງ, ເປັນບໍລິເວນກ້ວາງ ແລະ ເຂົ້າຍາກ;

4. ໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ເປັນເຈົ້າການ ສົມທົບກັບ ຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງເມືອງ ສືບຕໍ່ເຮັດການກວດກາ ແລະ ເກັບກຳຂໍ້ມູນ ການອອກໃບຢັ້ງຢືນນຳໃຊ້ທີ່ດິນປ່າໄມ້ ໃຫ້ແກ່ປະຊາຊົນ ທີ່ຢູ່ອາໃສ ແລະ ທຳການຜະລິດກະສິກຳ, ລວມທັງການອອກໃບຢັ້ງຢືນການນຳໃຊ້ທີ່ດິນ ໃຫ້ເຊົ່າ ຫຼື ສຳປະທານ ດຳເນີນກິດຈະການຕ່າງໆ ຢູ່ໃນເຂດ 3 ປະເພດປ່າ ກ່ອນ ແລະ ຫຼັງ ການກຳນົດເປັນປ່າດັ່ງນີ້:

    4.1 ກວດກາ ແລະ ເກັບກຳຂໍ້ມູນ ການອອກໃບຢັ້ງຢືນນຳໃຊ້ທີ່ດິນປ່າໄມ້ ໃຫ້ແກ່ປະຊາຊົນ ທີ່ຢູ່ອາໃສ ແລະ ທຳການຜະລິດກະສິກຳ ຢູ່ໃນເຂດ 3 ປະເພດປ່າ ກ່ອນການກຳນົດເປັນເຂດປ່າໄມ້ ຫຼື ກ່ອນແຈ້ງການ ເລກທີ 1423/ກຊສ, ລົງວັນທີ 25 ມີນາ 2021; ຖ້າເຫັນວ່າ ບໍ່ສອດຄ່ອງ ຕາມມາດຕາ 44 ກົດໝາຍ ວ່າດ້ວຍທີ່ດິນ (ສະບັບປັບປຸງ) ແມ່ນລົບລ້າງ ແລະ ດຳເນີນການຈັດສັນຄືນໃໝ່ ຈຶ່ງອອກໃບຢັ້ງຢືນການນຳໃຊ້ທີ່ດິນປ່າໄມ້ ຕາມກົດ ໝາຍ, ໂດຍໃຫ້ປະຊາຊົນມີສ່ວນຮ່ວມໃນການຄຸ້ມຄອງ ປົກປັກຮັກສາ ແລະ ພັດທະນາປ່າໄມ້ ໃນເຂດດັ່ງກ່າວ;

    4.2 ກວດກາ ແລະ ເກັບກຳຂໍ້ມູນ ການອອກໃບຢັ້ງຢືນນຳໃຊ້ທີ່ດິນປ່າໄມ້ ໃຫ້ແກ່ປະຊາຊົນ ທີ່ຢູ່ອາໃສ ແລະ ທຳການຜະລິດກະສິກຳ ຢູ່ໃນເຂດ 3 ປະເພດປ່າ ຫຼັງກຳນົດເປັນເຂດປ່າໄມ້ ຫຼື ຫຼັງແຈ້ງການເລກທີ 1423/ກຊສ, ລົງວັນທີ 25 ມີນາ 2021; ຖ້າເຫັນວ່າ ບໍ່ສອດຄ່ອງຕາມມາດຕາ 44 ກົດໝາຍ ວ່າດ້ວຍທີ່ດິນ (ສະບັບປັບປຸງ) ແມ່ນໃຫ້ລົບລ້າງ ແລະ ທວງຄືນທີ່ດິນຂອງລັດ (ມາດຕາ 84 ກົດໝາຍ ວ່າດ້ວຍທີ່ດິນ ສະບັບປັບປຸງ), ພ້ອມທັງດຳເນີນຄະດີຕາມກົດໝາຍ; (ມາດຕາ 116 ຂໍ້ 2 ກົດໝາຍ ວ່າດ້ວຍທີ່ດິນດັ່ງກ່າວ);

    4.3 ກວດກາ ແລະ ເກັບກຳຂໍ້ມູນ ການດຳເນີນກິດຈະການ ຫຼື ດຳເນີນທຸລະກິດ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກໍລະນີບໍ່ໄດ້ຮັບອະນຸຍາດ ຫຼື ເຄື່ອນໄຫວບໍ່ຖືກຕ້ອງ ແມ່ນສະເໜີຂັ້ນເທິງ ຢຸດຕິ, ຍົກເລີກ, ຮື້ຖອນ, ພ້ອມທັງປະຕິບັດມາດຕະການຢ່າງເຂັ້ມງວດ (ຂໍ້ຕົກລົງ 1858/ກປ, ລົງວັນທີ 24 ມີນາ 2023);

    4.4 ກວດກາ ແລະ ເກັບກຳຂໍ້ມູນ ການອອກໃບຢັ້ງຢືນການນຳໃຊ້ທີ່ດິນ ໃຫ້ເຊົ່າ ຫຼື ສຳປະທານ, ຕາມການອະນຸຍາດຂອງລັດຖະບານ ຫຼື ກະຊວງກະສິກຳ ແລະ ປ່າໄມ້ ຫຼື ອົງການປົກຄອງແຂວງ, ໃຫ້ດຳເນີນຕາມມາດຕາ 119 ຂອງກົດໝາຍ ວ່າດ້ວຍທີ່ດິນ (ສະບັບປັບປຸງ), ໂດຍຜ່ານການປະມູນ ແລະ ດຳເນີນໃນເຂດທີ່ລັດໄດ້ຈັດສັນໄວ້, ເຮັດການສຶກສາຄວາມເປັນໄປໄດ້ ຫຼື ປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ສ້າງແຜນຄຸ້ມຄອງ ແລະ ຕິດຕາມ, ພາຍຫຼັງໄດ້ຮັບອະນຸມັດ ອອກໃບຢັ້ງຢືນໃຫ້ເຊົ່າ ຫຼື ສຳປະທານ ຕາມກົດໝາຍ;

    4.5 ກວດກາຄືນ ການນຳໃຊ້ທີ່ດິນປ່າໄມ້ ໃນເຂດ 3 ປະເພດປ່າໄມ້ ຕາມການຈັດສັນທີ່ດິນທ້ອງຖິ່ນ ໄລຍະຜ່ານມາ ພ້ອມທັງສ້າງ ແລະ ກຳນົດແຜນລົງສຳຫຼວດເຂດ ທີ່ຍັງບໍ່ທັນໄດ້ດຳເນີນການຈັດສັນໃຫ້ສຳເລັດ ຕາມແຜນການທີ່ໄດ້ກຳນົດໄວ້ ໃນແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ຮອດປີ 2030;

    4.6 ສ້າງ ແລະ ກຳນົດແຜນດຳເນີນການສຳຫຼວດ ເກັບກຳຂໍ້ມູນ ການຂຶ້ນທະບຽນອອກໃບຢັ້ງຢືນການນຳໃຊ້ທີ່ດິນປ່າໄມ້ ທີ່ຢູ່ອາໄສ ແລະ ທຳການຜະລິດ ໃນຂອບເຂດ 3 ປະເພດປ່າໃຫ້ປະຊາຊົນ ພາຍຫຼັງທີ່ໄດ້ສຳເລັດ ການສຳຫຼວດຈັດສັນປ່າໄມ້ ແລະ ທີ່ດິນປ່າໄມ້ ແຕ່ລະປະເພດຄືນໃໝ່, ໂດຍມີກຳນົດເວລາ ບໍ່ເກີນ 50 ປີ ສາມາດຕໍ່ໄດ້ ຕາມເງື່ອນໄຂຄວາມເໝາະສົມໃນເນື້ອທີ່ບໍ່ເກີນ 20 ເຮັກຕາ ຕໍ່ ຄອບຄົວ;

    4.7 ມີການປະສານສົມທົບກັບບັນດາຂະແໜງການກ່ຽວຂ້ອງອ້ອມຂ້າງແຂວງ, ເມືອງ ແລະ ບ້ານ ເພື່ອພັດທະນາລະບົບຕິດຕາມ, ກວດກາ ເພື່ອຢັ້ງຢືນຈຸດສະສົມຄວາມຮ້ອນພາຍໃນແຂວງ, ສ້າງແຜນທີ່ພື້ນທີ່ຜົນກະທົບຈາກໄຟໄໝ້ປ່າ ທີ່ມີຄວາມຊັດເຈນສູງ, ສ້າງແຜນທີ່ຄວາມສ່ຽງ ທີ່ອາດຈະເກີດຂຶ້ນໃນແຕ່ລະປີ ແລະ

ສາມາດນຳໃຊ້ເຂົ້າໃນລະບົບລາຍງານປະຈຳ ອາທິດ, ເດືອນ, ປີ ໃນລະດັບບ້ານ, ເມືອງ ແລະ ແຂວງ ເພື່ອເປັນບ່ອນອີງໃນການວາງແຜນ, ກຳນົດນະໂຍບາຍ, ງົບປະມານ ແລະ ມາດຕະການຕ່າງໆ ໃນການປ້ອງກັນໄຟໄໝ້ລາມປ່າຢ່າງທັນເຫດການ ແບບຈຳລອງກະຈາຍຕົວຂອງມົນລະພິດໝອກຄວັນ(PM 2,5) ໃຫ້ປະຊາຊົນ, ພະນັກງານ, ທະຫານ, ຕຳຫຼວດ ພາຍໃນແຂວງໄດ້ຮັບຊາບ ແລະ ສາມາດແຈ້ງເຕືອນຜ່ານໂທລະສັບມືຖືຂອງຜູ້ຊົມໃຊ້ໄດ້ ຫຼື ຜ່ານສື່ອອນລາຍ, ວີດີໂອ, ໂປສະເຕີ, ປະຕິທິນ, ວິທະຍຸ, ໂທລະພາບ ແລະ ສື່ໜັງສືພິມອື່ນໆຕາມຄວາມເໝາະສົມ;

5. ໃຫ້ພະແນກແຜນການ ແລະ ການລົງທຶນແຂວງ ເປັນໃຈການປະສານສົມທົບກັບພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ຂະແໜງການທີ່ກ່ຽວຂ້ອງ ສ້າງ ແລະ ກຳນົດແຜນດຳເນີນການສຳຫຼວດ, ເກັບກຳຂໍ້ມູນ ການເຄື່ອນຍ້າຍຂອງພົນລະເມືອງ, ສ້າງ ແລະ ກຳນົດແຜນພັດທະນາແຕ່ລະເຂດຕາມທ່າແຮງ ແລະ ເງື່ອນໄຂຂອງແຕ່ລະທ້ອງຖິ່ນ, ຕິດພັນກັບການພັດທະນາອາຊີບໃໝ່ທີ່ໝັ້ນຄົງ, ປ່ຽນແທນອາຊີບທີ່ອາໄສແຕ່ການຜະລິດກະສິກຳ ແລະ ປ່າໄມ້ ເປັນຕົ້ນຕໍ, ພ້ອມທັງຈັດສັນພູມລຳເນົາຄົງທີ່, ເຂດທຳການຜະລິດ ຕິດພັນກັບກຳນົດວິທີການ ແລະ ສົ່ງເສີມຮູບແບບການຜະລິດທີ່ໝັ້ນຄົງ ໃຫ້ປະຊາຊົນບັນດາເຜົ່າ ທີ່ຢູ່ອາໄສ ແລະ ທຳການຜະລິດໃນເຂດຊົນນະບົດ ໂດຍສະເພາະໃນເຂດອຸທິຍານແຫ່ງຊາດ, ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ ເພື່ອປັບປຸງຊີວິດການເປັນຢູ່ ແລະ ແກ້ໄຂຄວາມທຸກຍາກ ກ້າວໄປເຖິງຢຸດຕິບັນຫາການເຄື່ອນຍ້າຍຕັ້ງຖິ່ນຖານພູມລຳເນົາຂອງປະຊາຊົນແບບຊະຊາຍ;

6. ໃຫ້ບັນດາ ພະແນກການ, ອົງການທຽບເທົ່າອ້ອມຂ້າງແຂວງ, ກອງບັນຊາການທະຫານແຂວງ, ກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ບັນດາທ່ານເຈົ້າເມືອງ 05 ເມືອງ ແລະ ອົງການປົກຄອງບ້ານ ຕະຫຼອດຮອດ ພໍ່ແມ່ປະຊາຊົນບັນດາເຜົ່າ ໃນຂອບເຂດທົ່ວແຂວງ, ສືບຕໍ່ປະຕິບັດ ຄຳສັ່ງເລກທີ 15/ນຍ, ລົງວັນທີ 13 ພຶດສະພາ 2016 ເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງ ກວດກາ ການຂຸດຄົ້ນໄມ້, ການເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້ ດັ່ງນີ້:

   **6.1** ສືບຕໍ່ ເຮັດການເຄື່ອນໄຫວກວດກາລາດຕາເວນ ຕາມເສັ້ນທາງຫຼວງ, ເສັ້ນທາງດິນແດງ ເຂດຊາຍແດນ ຫຼື ຈຸດທີ່ຫໍ່ແຫຼມຕ່າງໆ ເພື່ອສະກັດກັ້ນການລັກລອບຂຸດຄົ້ນ, ການເຄື່ອນຍ້າຍໄມ້ ແລະ ເຄື່ອງປ່າຂອງດົງ ແລະ ທຸລະກິດໄມ້ ທີ່ຜິດຕໍ່ລະບຽບກົດໝາຍ;

   **6.2** ບໍ່ອະນຸຍາດ ໃຫ້ເອົາໄມ້ແກ້ໄຂນະໂຍບາຍໃຫ້ແກ່ບຸກຄົນໃດໜຶ່ງຢ່າງເດັດຂາດ, ພ້ອມດຽວກັນນີ້ ກໍ່ໃຫ້ຢຸດເຊົາຢ່າງຂາດຕົວ ກ່ຽວກັບການດຳເນີນການສຳຫຼວດ ແລະ ການເໜີຂໍອະນຸຍາດເກັບກູ້ທ່ອນໂຮມໄມ້ກິ່ງງ່າ, ໄມ້ທ່ອນສັ້ນ ແລະ ໄມ້ຕາຍຢືນ, ໄມ້ຕາຍລົມ ຫຼື ໄມ້ນອນຂອນຕາຍ ທີ່ຍັງຕົກຄ້າງ ໃນປ່າທຳມະຊາດໃນທຸກໆກໍລະນີ;

   **6.3** ສຳລັບການຜະລິດຖ່ານຂາວ ເພື່ອຈຳໜ່າຍພາຍໃນ ແລະ ສົ່ງອອກຕ່າງປະເທດ ແມ່ນອະນຸຍາດໃຫ້ນຳໃຊ້ປະເພດໄມ້ຕິ້ວ ໃນເຂດປ່າຜະລິດທີ່ໄດ້ຜ່ານການຈັດສັນ, ເຂດກໍ່ສ້າງພື້ນຖານໂຄງລ່າງ, ເຂດຫັນປ່ຽນທີ່ດິນປ່າໄມ້, ເຂດປ່າຊົມໃຊ້ຂອງບ້ານ ທີ່ລັດຈັດສັນ ແລະ ມອບສິດນຳໃຊ້ຖືກຕ້ອງຕາມກົດໝາຍ, ແຕ່ຕ້ອງມີແຜນສົ່ງເສີມປູກຟື້ນຟູປ່າໄມ້ຕິ້ວ, ເພື່ອສ້າງເປັນແຫຼ່ງວັດຖຸດິບ ສະໜອງໃຫ້ໂຮງງານໃນອານາຄົດ, ປ່ຽນແທນການນຳໃຊ້ໄມ້ຕິ້ວຈາກປ່າທຳມະຊາດ, ສ່ວນການສະເໜີສ້າງຕັ້ງໂຮງງານ ເພື່ອຜະລິດ ແລະ ຈຳໜ່າຍຖ່ານຂາວ ໃຫ້ປະຕິບັດຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ເລກທີ 4847/ກປ, ລົງວັນທີ 09 ຕຸລາ 2024 ວ່າດ້ວຍການຄຸ້ມຄອງໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ ແລະ ລະບຽບການອື່ນຢ່າງເຂັ້ມງວດ;

7. ສືບຕໍ່ເຝົ້າລະວັງ ແລະ ເປັນເຈົ້າການ ໃນກໍລະນີສະພາບອາກາດບໍ່ປົກກະຕິ ເປັນຕົ້ນລົມແຮງ, ພະຍຸໃຕ້ຝຸ່ນ ເຊິ່ງເປັນເຫດໃຫ້ເກີດອະຄີໄພ ແລະມີໄຟໄໝ້ລາມປ່າ ມາສູ່ເຂດທີ່ຢູ່ອາໄສ, ຖຽງໄຮ່ຖຽງນາ, ເຫຼົ້າເຂົ້າ ແລະ ອື່ນໆ ໂດຍການຖິ້ມກົດກອກຢາ, ການດັງໄຟໃນປ່າ ບ່ອນທຳມາຫາກິນບໍ່ດັບມອດ ແລະ ອື່ນໆ;

8. ຫ້າມເດັດຂາດ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ເປັນຜູ້ກະທຳໂດຍກົງ ຫຼື ຢູ່ເບື້ອງຫຼັງ ຂອງການບຸກລຸກ, ຈັບຈ່ອງ, ຊື້-ຂາຍ, ບຸກເບີກ, ຖາກຖາງ, ຈູດ, ຕັດໄມ້, ຂະຫຍາຍເນື້ອທີ່ທາການຜະລິດ ແລະ ດຳເນີນກິດຈະການຕ່າງໆ ທີ່ບໍ່ຖືກຕ້ອງຕາມກົດໝາຍ ໃນເຂດປ່າໄມ້ ແລະ ທີ່ດິນປ່າໄມ້ ເປັນຕົ້ນຢູ່ໃນເຂດອຸທິຍານແຫ່ງຊາດ, ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດຢ່າງເດັດຂາດ, ຜູ້ລະເມີດ ຈະຖືກດຳເນີນຄະດີຕາມກົດໝາຍ ແລະ ລະບຽບການຕ່າງໆຢ່າງເຂັ້ມງວດ;

9. ຫ້າມການຈັດຕັ້ງທີ່ກ່ຽວຂ້ອງຂອງລັດ ອອກອະນຸຍາດໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ນຳໃຊ້ທີ່ດິນ ແລະ ດຳເນີນກິດຈະການຢູ່ໃນເຂດປ່າໄມ້ ແລະ ທີ່ດິນປ່າໄມ້ ໃນເຂດອຸທິຍານແຫ່ງຊາດ, ປ່າສະຫງວນ, ປ່າປ້ອງກັນ ແລະ ປ່າຜະລິດ ທີ່ບໍ່ສອດຄ່ອງກົດໝາຍ ແລະ ລະບຽບການ;

10. ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຈູດປ່າຊະຊາຍ ເພື່ອລ່າສັດ, ປູກພືດ, ເປັນສະຖານທີ່ລ້ຽງສັດ ຫຼື ເພື່ອເປົ້າໝາຍອື່ນ, ຖ້າລະເມີດຕ້ອງຮັບຜິດຊອບ ຕໍ່ຜົນເສຍຫາຍທີ່ສ້າງຂຶ້ນ ແລະ ຈະຖືກດຳເນີນຄະດີຕາມກົດໝາຍ ແລະ ລະບຽບການຕ່າງໆຢ່າງເຂັ້ມງວດ;

11. ບໍ່ອະນຸຍາດໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ດຳເນີນກິດຈະການຊອກຄົ້ນ, ສຳຫຼວດ ແລະ ຂຸດຄົ້ນ ແຮ່ທາດ ໃນເຂດອຸທິຍານແຫ່ງຊາດ, ປ່າສະຫງວນ, ປ່າປ້ອງກັນຢ່າງເຂັ້ມງວດ;

12. ໃຫ້ບັນດາຫົວໜ້າພະແນກການອ້ອມຂ້າງແຂວງ, ກອງບັນຊາການທະຫານແຂວງ, ກອງບັນຊາການປ້ອງກັນຄວາມສະຫງົບແຂວງ ແລະ ທ່ານເຈົ້າເມືອງ 5 ເມືອງ, ຄົ້ນຄ້ວາ, ກຳແໜ້ນຄຳສັ່ງສະບັບນີ້, ພ້ອມຈັດຕັ້ງ ເຜີຍແຜ່, ເຊື່ອມຊຶມໃນທົ່ວສັງຄົມ ໃຫ້ມີຄວາມຮັບຮູ້ເຂົ້າໃຈໄປໃນທິດທາງດຽວ, ພ້ອມດຽວກັນນີ້ ກໍ່ໃຫ້ສ້າງ ແລະ ກຳນົດແຜນການຈັດຕັ້ງ ແລະ ເຄື່ອນໄຫວໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ;

13. ຄຳສັ່ງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ, ບັນດາຄຳສັ່ງ, ຂໍ້ຕົກລົງ, ແຈ້ງການ ແລະ ນິຕິກຳຕ່າງໆ ຂອງພະແນກການ ແລະ ລວມທັງອົງການປົກຄອງເມືອງ ທີ່ໄດ້ປະກາດໃຊ້ຜ່ານມາ ເຊິ່ງມີເນື້ອໃນຂັດກັບຄຳສັ່ງສະບັບນີ້ ລ້ວນແຕ່ຖືກລຶບລ້າງ.

**ເຈົ້າແຂວງ**

ພັທ ວັນທອງ ກອງມະນີ

ບ່ອນນຳສົ່ງ:

- ຫ້ອງວ່າການແຂວງ 01 ສະບັບ;
- ບັນດາພະແນກການອ້ອມຂ້ອງແຂວງ 01 ສະບັບ;
- ກອງບັນຊາການ ປກຊ-ປກສ 01 ສະບັບ;
- ຫ້ອງວ່າການເມືອງ 5 ເມືອງໆ ລະ 01 ສະບັບ;
- ເກັບຮັກສາໄວ້ 01 ສະບັບ.